UNODC
United Nations Office on Drugs and Crime
ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກຳ



## ຄຳແນະນຳ

# ‘ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ’ ເປັນວິທີການໃນການຄ້າມະນຸດ

ຢູ່ໃນມາດຕາ 3 ຂອງ ອະນຸສັນຍາວ່າດ້ວຍການສະກັດກັ້ນ, ປາບປາມ ແລະ ດຳເນີນຄະດີ ການຄ້າມະນຸດ, ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ,

ທີ່ເພີ່ມໃສ່ ສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍ ການຕ້ານ ອາດຊະຍາກຳຂ້າມຊາດ

# ‘ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ’ ເປັນວິທີການໃນການຄ້າມະນຸດ

## ໃນມາດຕາ 3 ຂອງ ອະນຸສັນຍາວ່າດ້ວຍການ ສະກັດກັ້ນ, ປາບປາມ ແລະ ດຳເນີນຄະດີ ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ,

## ທີ່ເພີ່ມໃສ່ ສົນທິສັນຍາ ຂອງສະຫະປະຊາຊາດ ວ່າດ້ວຍ ການຕ້ານອາດຊະຍາກຳຂ້າມຊາດ

Australian Aid | ASEAN-Australia Counter Trafficking

ສົນທິສັນຍາ ASEAN ວ່າດ້ວຍ ການຕ້ານການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ (ACTIP), ກຳນົດ ການຄ້າມະນຸດ ຢູ່ໃນມາດຕາ 2(a) ທີ່ສອດຄ່ອງກັບ ນິຍາມສາກົນ ທີ່ຖືກກຳນົດໄວ້ ຢູ່ໃນມາດຕາ 3(a) ຂອງອະນຸສັນຍາ ວ່າດ້ວຍການສະກັດກັ້ນ, ປາບປາມ ແລະ ດຳເນີນຄະດີຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທີ່ເພີ່ມໃສ່ ສົນທິສັນຍາ ຂອງສະຫະປະຊາຊາດ ວ່າດ້ວຍ ການຕ້ານອາດຊະຍາກຳຂ້າມຊາດ. ດັ່ງນັ້ນ, ບົດແນະນຳ ທີ່ກຳນົດຂ້າງລຸ່ມນີ້, ຊຶ່ງຖືກກຳນົດຂຶ້ນ ໂດຍ ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC) ແລະ ໄດ້ນຳມາຈັດພິມຄືນໃໝ່ ຢູ່ໃນເອກະສານສະບັບນີ້ ໂດຍໄດ້ຮັບອະນຸຍາດ ຈາກອົງການດັ່ງກ່າວ, ແມ່ນມີຄວາມກ່ຽວພັນກັບຄວາມເຂົ້າໃຈດ້ານ ‘ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ (APOV)’ ຢູ່ໃນພາກພື້ນອາຊຽນເໝືອນກັບຢູ່ບ່ອນອື່ນ.

ບົດແນະນຳສະບັບນີ້ ໄດ້ຖືກນຳສະເໜີໃຫ້ ຜູ້ປະຕິບັດດ້ານຄວາມຍຸຕິທຳທາງອາຍາ ໃນທົ່ວພາກພື້ນອາຊຽນ, ເພື່ອສະໜັບສະໜູນການຕີຄວາມໝາຍ ແລະ ການນຳໃຊ້ 'ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ' (APOV) ເປັນອົງປະກອບດ້ານວິທີການອັນໜຶ່ງສຳລັບການຄ້າມະນຸດ. ແຜນງານ ອາຊຽນ-ອົດສະຕຣາລີ ເພື່ອການຕ້ານການຄ້າມະນຸດ ປະຈຳພາກພື້ນ (ASEAN-ACT) ຂໍສະແດງຄວາມຂອບໃຈ ມາຍັງ UNODC ທີ່ໄດ້ໃຫ້ການສະໜັບສະໜູນ ການເຜີຍແຜ່ບົດແນະນຳທີ່ມີຄວາມສຳຄັນສະບັບນີ້ຢູ່ໃນພາກພື້ນອາຊຽນ.

ແຜນງານ ASEAN-ACT ໃຫ້ການສະໜັບສະໜູນໃນການອອກແບບເອກະສານສະບັບນີ້ ໂດຍໄດ້ຮັບອະນຸຍາດຈາກ ອົງການ UNODC, ແລະ ບໍ່ໄດ້ມີການປ່ຽນແປງເນື້ອໃນຕົ້ນສະບັບຂອງເອກະສານ ທີ່ໄດ້ຂຽນ ແລະ ພັດທະນາໂດຍອົງການ UNODC.

ໃນການອອກແບບເອກະສານສະບັບນີ້ໃນຮູບແບບໃໝ່ ແມ່ນໄດ້ຮັບທຶນສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ໂດຍຜ່ານກະຊວງການຕ່າງປະເທດ ແລະ ການຄ້າ. ການສະແດງຄວາມຄິດເຫັນໃນເອກະສານສະບັບນີ້ ເປັນຂອງຜູ້ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ.

# ສາລະບານ


1 ພາກສະເໜີ 3

2 ຈຸດທີ່ສຳຄັນ 4

3 ສາຍພົວພັນ ຂອງ APOV ກັບ ອົງປະກອບດ້ານ 'ການກະທຳ' ຂອງ ນິຍາມການຄ້າມະນຸດ 5

4 ສາຍພົວພັນ ຂອງ APOV ຕໍ່ "ຈຸດປະສົງ" ຂອງການຂູດຮີດ ເຊິ່ງເປັນອົງປະກອບນິຍາມ 5

5 ສິ່ງທ້າທາຍດ້ານຫຼັກຖານ ແລະ ສິ່ງທີ່ຄວນເອົາໃຈໃສ່ ໃນການກຳນົດ APOV 6

6 ການກຳນົດ ແລະ ການບໍລິຫານຄວາມສ່ຽງ 7

7 ການປັບປຸງຄວາມເຂົ້າໃຈຂອງຜູ້ປະຕິບັດຕົວຈິງ ຕໍ່ກັບ APOV 8

# 1 ພາກສະເໜີ



## 1.1

ຈຸດປະສົງຂອງບົດແນະນຳສະບັບນີ້ ແມ່ນເພື່ອຊ່ວຍໃຫ້ຜູ້ປະຕິບັດວຽກງານຍຸຕິທຳທາງອາຍາ ເຂົ້າໃຈ ແລະ ນຳໃຊ້ APOV ເປັນໜຶ່ງໃນອົງປະປະກອບດ້ານວິທີການຂອງການຄ້າມະນຸດ, ເນື່ອງຈາກວ່າ ແນວຄວາມຄິດນີ້ ແມ່ນນອນຢູ່ໃນ ຄຳນິຍາມຂອງການຄ້າມະນຸດ ໃນອະນຸສັນຍາ ວ່າດ້ວຍການຄ້າມະນຸດ (Trafficking Protocol).[1]

## 1.2

ບົດແນະນຳສະບັບນີ້ໄດ້ອີງໃສ່ ເອກະສານຄົ້ນຄ້ວາຂອງ UNODC ຢູ່ໃນຫົວຂໍ້ດຽວກັນ,[2] ແລະ ແນະນຳໃຫ້ຜູ້ປະຕິບັດວຽກງານຕົວຈິງ ໄດ້ເບິ່ງຄືນ ເອກະສານດັ່ງກ່າວ ເພື່ອເປັນຂໍ້ມູນເພີ່ມຕື່ມ, ລວມທັງລາຍລະອຽດໃນກົດໝາຍພາຍໃນປະເທດ ແລະ ການປະຕິບັດຕົວຈິງໃນແຕ່ລະປະເທດ.

1 ມາດຕາ 3(a) ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ລະບຸວ່າ "ການຄ້າມະນຸດ" ຈະໝາຍເຖິງການຮັບເຂົ້າເຮັດວຽກ, ການຂົນສົ່ງ, ການຍົກຍ້າຍ, ການໃຫ້ທີ່ພັກເຊົາ ຫຼື ການຮັບເອົາບຸກຄົນໃດໜຶ່ງ, ດ້ວຍວິທີການຂົ່ມຂູ່ ຫຼື ໃຊ້ກຳລັງ ຫຼື ຮູບແບບອື່ນໆ ເຊັ່ນ ການບີບບັງຄັບ, ການລັກພາຕົວ, ການສໍ້ໂກງ, ການຫຼອກລວງ, ການສວາຍໃຊ້ອຳນາດໃນທາງທີ່ຜິດ ຫຼື ການສວາຍໃຊ້ຖານະຄວາມອ່ອນແອ ຫຼື ການໃຫ້ ຫຼື ການຮັບເງິນ ຫຼື ຜົນປະໂຫຍດ ເພື່ອບັນລຸການສົມຍອມ ຂອງບຸກຄົນທີ່ມີການຄວບຄຸມຄົນອື່ນ ສຳລັບ ຈຸດປະສົງຂອງການສວາຍໃຊ້. ການສວາຍໃຊ້ ຈະປະກອບມີຢ່າງໜ້ອຍແມ່ນ ການຂູດຮີດທາງປະເວນີ ຕໍ່ ຄົນອື່ນ ຫຼື ຮູບແບບອື່ນໆ ຂອງການຂູດຮີດທາງເພດ, ການບັງຄັບໃຊ້ແຮງງານ ຫຼື ການບໍລິການ, ການເປັນຂ້າທາດ ຫຼື ການປະຕິບັດ ທີ່ຄ້າຍຄືກັນກັບຂ້າທາດ, ການເປັນຂ້ອຍຂ້າ ຫຼື ການຕັດອະໄວຍະວະຕ່າງໆຂອງຮ່າງກາຍ.

2 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກຳ, ມີບົດຄົ້ນຄ້ວາ ກ່ຽວກັບ ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ ແລະ ວິທີການອື່ນໆ ຢູ່ພາຍໃນຄຳນິຍາມ ຂອງ ການຄ້າມະນຸດ, ສະບັບເດືອນຕຸລາ ປີ 2012, ຊຶ່ງສາມາດເອົາຂໍ້ມູນດັ່ງກ່າວໄດ້ຈາກ: http://www.unodc.org/unodc/en/human- trafficking/publications.html?ref=menuside

# 2 ຈຸດທີ່ສຳຄັນ

## 2.1

ເນື່ອງຈາກວ່າ ເປັນອາດຊະຍາກຳ ໃນການຄ້າມະນຸດທີ່ເປັນເດັກນ້ອຍ ໄດ້ລວມເອົາ ອົງປະກອບຂອງການກະທຳຜິດ 'ດ້ານການກະທຳ' ເຊັ່ນ ສະແດງອອກໃນການຮັບເຂົ້າເຮັດວຽກ, ການໃຫ້ທີ່ພັກເຊົາ, ແລະ ອື່ນໆ ສຳລັບ ອົງປະກອບຂອງການກະທຳຜິດດ້ານ 'ຈຸດປະສົງ' ເພື່ອການຂູດຮີດ, ດັ່ງນັ້ນ, APOV ຫຼື ວິທີການອື່ນໆ ແມ່ນບໍ່ຈຳເປັນຕ້ອງ ສະແດງອອກກໍໄດ້   ເພື່ອເຫດຜົນໃນການດຳເນີນຄະດີ   ການຄ້າມະນຸດທີ່ເປັນເດັກນ້ອຍ.

## 2.2

ການກຳນົດ ໃຫ້ເຫັນວ່າ ຜູ້ຖືກເຄາະຮ້າຍມີຄວາມສ່ຽງ ຈະມີຄວາມສຳຄັນ ຕໍ່ຫຼາຍດ້ານ ຂອງຄະດີການຄ້າມະນຸດ. ຕົວຢ່າງ, ຄວາມອ່ອນແອສາມາດເປັນຕົວຊີ້ວັດທີ່ສຳຄັນ ໃນເວລາກຳນົດຕົວຜູ້ຖືກເຄາະຮ້າຍ; ແລະ ການປະເມີນ ຄວາມອ່ອນແອຢ່າງແມ້ນຢຳ ສາມາດຊ່ວຍຮັບປະກັນວ່າ ພະຍານທີ່ເປັນຜູ້ເຄາະຮ້າຍຈະໄດ້ຮັບການສະໜັບສະໜູນ ແລະ ປົກປ້ອງຢ່າງເຫມາະສົມ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີຄວາມຮຽກຮ້ອງຕ້ອງການຫຼາຍຢ່າງໃນການດຳເນີນຄະດີອາຍາ. ການມີຫລັກຖານພຽງເລັກນ້ອຍໃນການພິສູດຄວາມສ່ຽງຢ່າງດຽວ ແມ່ນບໍ່ພຽງພໍທີ່ຈະສະໜັບສະໜູນການດຳເນີນຄະດີ ທີ່ຈະກ່າວຫາວ່າ APOV ວ່າເປັນວິທີການໜຶ່ງທີ່ໄດ້ນຳໃຊ້ເປັນອົງປະກອບຂອງການກະທຳຜິດດ້ານ  "ການກະທຳ" ສະເພາະ. ໃນກໍລະນີດັ່ງກ່າວ, ການທີ່ມີ ທັງ ຄວາມອ່ອນແອ ແລະ ການສວຍໃຊ້ຄວາມສ່ຽງທີ່ຈະຖືກລະເມີດດັ່ງກ່າວ ຕ້ອງໄດ້ອີງໃສ່ ຫຼັກຖານທີ່ໜ້າເຊື່ອຖືໄດ້.

## 2.3

ວິທີການທີ່ດີທີ່ສຸດໃນການປະເມີນວ່າມີຄວາມອ່ອນແອນັ້ນ ຄວນພິຈາລະນາເປັນແຕ່ລະກໍລະນີໄປ ໂດຍຄຳນຶງເຖິງ ບັນຫາສ່ວນຕົວ, ສະຖານະການ ຫຼື ສະພາບເງື່ອນໄຂ ຂອງຜູ້ຖືກເຄາະຮ້າຍ ທີ່ຖືກກ່າວຫາ. ເຊັ່ນ ຄວາມອ່ອນສ່ວນບຸກຄົນອາດຈະກ່ຽວຂ້ອງກັບ ຄວາມພິການ ທາງດ້ານຮ່າງກາຍ ຫຼື ຈິດໃຈ ຂອງບຸກຄົນນັ້ນໆ. ຄວາມອ່ອນແອ ດ້ານສະຖານະການອາດຈະກ່ຽວຂ້ອງກັບ ບຸກຄົນໃດໜຶ່ງທີ່ຢູ່ຕ່າງປະເທດ ແບບບໍ່ປົກກະຕິ ຊຶ່ງວ່າ ຜູ້ກ່ຽວ ແມ່ນມີຄວາມໂດດດ່ຽວ ດ້ານສັງຄົມ ຫຼື ພາສາ ປາກເວົ້າ. ຄວາມອ່ອນແອ ດ້ານສະພາບການ ອາດຈະກ່ຽວຂ້ອງກັບ ການວ່າງງານ ຫຼື ຄວາມທຸກຍາກທາງດ້ານເສດຖະກິດ ຂອງບຸກຄົນ. ຄວາມອ່ອນແອດັ່ງກ່າວ ສາມາດມີຢູ່ກ່ອນໜ້ານີ້ແລ້ວ ແລະ ອາດເກີດຂຶ້ນຈາກການກະທຳຂອງຜູ້ຄ້າມະນຸດ. ຄວາມອ່ອນແອທີ່ມີຢູ່ກ່ອນຫນ້ານີ້ ອາດຈະກ່ຽວຂ້ອງກັບ (ແຕ່ກໍບໍ່ຈຳກັດສະເພາະ) ຄວາມທຸກຍາກ; ຄວາມພິການທາງຈິດໃຈ ຫຼື ຮ່າງກາຍ; ໄວຫນຸ່ມ ຫຼື ຜູ້ທີ່ມີອາຍຸສູງ; ເພດ; ການຖືພາ; ວັດທະນະທຳ; ພາສາ; ຄວາມເຊື່ອ; ສະພາບຂອງຄອບຄົວ ຫຼື ສະຖານະທີ່ຜິດປົກກະຕິ. ຄວາມອ່ອນແອທີ່ຖືກສ້າງຂຶ້ນ ອາດກ່ຽວຂ້ອງກັບ (ແຕ່ກໍບໍ່ຈຳກັດໃສ່ສະເພາະ) ຄວາມໂດດດ່ຽວ ທາງດ້ານສັງຄົມ, ວັດທະນະທຳ ຫຼື ພາສາ; ສະຖານະພາບ ທີ່ຜິດປົກກະຕິ; ຫຼື ການເພິ່ງພາອາໄສ ທີ່ເກີດຈາກ ການເສບຢາເສບຕິດ ຫຼື ທີ່ມາກັບຄວາມຮັກ ຫຼື ອາລົມ ຫຼື ຜ່ານທາງ ການນຳໃຊ້ພິທີກຳ ຫຼື ການປະຕິບັດ ທາງວັດທະນະທຳ ຫຼື ສາດສະຫນາ.

## 2.4

ເພາະສະນັ້ນ, ຄວາມອ່ອນແອ ຂອງຜູ້ຖືກເຄາະຮ້າຍ ອາດຈະເປັນຕົວຊີ້ບອກເຖິງ APOV, ແຕ່ຈະບໍ່ຖືວ່າ ເປັນ ວິທີການຂອງການຄ້າມະນຸດ ເວັ້ນເສຍແຕ່ວ່າ ສະຖານະຄວາມອ່ອນແອດັ່ງກ່າວ ຫາກຖືກສວຍໃຊ້ ໃນລະດັບ ທີ່ສະແດງໃຫ້ເຫັນວ່າ ຄວາມເຫັນດີເຫັນພ້ອມ ຂອງຜູ້ຖືກເຄາະຮ້າຍ ໄດ້ຖືກປະຕິເສດ.

## 2.5

ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດ ເກີດຂຶ້ນ ເມື່ອຄວາມອ່ອນແອ ສ່ວນຕົວ, ຄວາມອ່ອນແອດ້ານສະຖານະການ ຫຼື ສະພາບເງື່ອນໄຂຂອງບຸກຄົນ ຖືກນຳໃຊ້ດ້ວຍມີເຈດຈຳນົງ ຫຼື ຖືກເອົາລັດເອົາປຽບ  ເຊັ່ນ ຮັບເຂົ້າເຮັດວຽກ, ຂົນສົ່ງ, ຍົກຍ້າຍ, ໃຫ້ທີ່ພັກເຊົາ ຫຼື ຮັບເອົາບຸກຄົນດັ່ງກ່າວ ເພື່ອຈຸດປະສົງ ໃນການຂູດຮີດເຂົາເຈົ້າ, ສຳລັບສິ່ງດັ່ງກ່າວນັ້ນ, ບຸກຄົນເຊື່ອວ່າ ການປະຕິບັດຕາມເຈດຈຳນົງ ຂອງຜູ້ລ່ວງລະເມີດ ເປັນທາງເລືອກດຽວ ທີ່ຍອມຮັບໄດ້ ຫລື ທີ່ມີຄວາມເປັນຈິງທີ່ຜູ້ກ່ຽວມີ, ແລະ ຄວາມເຊື່ອດັ່ງກ່າວແມ່ນສົມເຫດສົມຜົນ ເມື່ອພິຈາລະນາເຖິງສະຖານະການຂອງຜູ້ຖືກເຄາະຮ້າຍໃນເວລານັ້ນ. ໃນການກຳນົດວ່າ ຄວາມເຊື່ອ ຂອງຜູ້ຖືກເຄາະຮ້າຍ ທີ່ຜູ້ກ່ຽວບໍ່ມີທາງເລືອກທີ່ແທ້ຈິງ ຫຼື ທີ່ສາມາດຍອມຮັບໄດ້ ແມ່ນມີຄວາມສົມເຫດສົມຜົນ ຫຼື ບໍ່ ນັ້ນ, ຄວນຈະຄຳນຶງເຖິງ ລັກສະນະສ່ວນຕົວ ແລະ ສະພາບເງື່ອນໄຂ ຂອງຜູ້ເຄາະຮ້າຍ.

## 3 ສາຍພົວພັນ ຂອງ APOV ຕໍ່ "ຈຸດປະສົງ" ຂອງການຂູດຮີດ ເຊິ່ງເປັນອົງປະກອບນິຍາມ



### 3.1

APOV ສາມາດເປັນວິທີການ ຊຶ່ງວ່າ ມີການລົງມືປະຕິບັດ 'ການກະທຳ' ໃດໜຶ່ງທີ່ເປັນການຄ້າມະນຸດ (ການຮັບເຂົ້າເຮັດວຽກ, ການຂົນສົ່ງ, ການຍົກຍ້າຍ, ການໃຫ້ທີ່ພັກເຊົາ ຫຼື ການຮັບເອົາບຸກຄົນໃດໜຶ່ງ).

### 3.2

ຄຳນິຍາມ ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ກຳນົດສາຍພົວພັນຢ່າງຈະແຈ້ງ ລະຫວ່າງ 'ການກະທຳ' ແລະ 'ວິທີການ'. ດັ່ງນັ້ນ, ເມື່ອ APOV ຖືກກ່າວຫາວ່າເປັນ 'ວິທີການ', ຄວນສະແດງຕົວຜູ້ກະທຳຜິດ ທີ່ໄດ້ລ່ວງລະເມີດສະຖານະພາບຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ ເພື່ອຮັບເຂົ້າເຮັດວຽກ, ຂົນສົ່ງ, ຍົກຍ້າຍ, ໃຫ້ທີ່ພັກເຊົາ, ຫຼື ຮັບເອົາຄົນດັ່ງກ່າວນັ້ນ.

## 4 ສາຍພົວພັນ ຂອງ APOV ຕໍ່ "ຈຸດປະສົງ" ຂອງການຂູດຮີດ ເຊິ່ງເປັນອົງປະກອບນິຍາມ

### 4.1

ເຊັ່ນດຽວກັນກັບ 'ວິທີການ' ອື່ນໆ, APOV ມີຄວາມກ່ຽວຂ້ອງກັບໝົດທຸກຮູບແບບ ຂອງການຄ້າມະນຸດ ແລະ ໝົດທຸກຈຸດປະສົງຂອງການຂູດຮີດທີ່ໄດ້ລະບຸໄວ້ ຢູ່ໃນອະນຸສັນຍາວ່າດ້ວຍການຄ້າມະນຸດ. ນອກຈາກນັ້ນ, ມັນຍັງກ່ຽວຂ້ອງກັບຈຸດປະສົງ ຂອງການຂູດຮີດອື່ນໆ ທີ່ໄດ້ຖືກກຳນົດໄວ້ ຢູ່ໃນກົດໝາຍແຫ່ງຊາດ ແລະ ຂອງສາກົນ ລວມທັງການຂໍທານ ແລະ ການຂູດຮີດຢູ່ໃນກິດຈະກຳການເຄື່ອນໄຫວທາງອາຍາ.

### 4.2

APOV ບໍ່ຄວນຖືກຄົ້ນພົບ ໄດ້ຢ່າງງ່າຍດາຍ ສຳລັບບາງຈຸດປະສົງ ຂອງການຂູດຮີດທີ່ໜ້ອຍ ຫຼື ຫຼາຍກວ່າ ສຳລັບຈຸດປະສົງອື່ນໆ. ການຄົ້ນພົບ APOV ແມ່ນຂຶ້ນກັບສະເພາະຫຼັກຖານທີ່ໜ້າເຊື່ອຖືເທົ່ານັ້ນ ທີ່ກຳນົດ ການມີຖານະຄວາມອ່ອນແອ ຢູ່ໃນສ່ວນຂອງຜູ້ຖືກເຄາະຮ້າຍ ແລະ ສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດດັ່ງກ່າວ ໂດຍຜູ້ຄ້າມະນຸດສຳລັບຈຸດປະສົງໃນການຂູດຮີດຜູ້ຖືກເຄາະຮ້າຍ. ຮູບແບບອັນສະເພາະ ຂອງ ຈຸດປະສົງເພື່ອການຂູດຮີດ ຢູ່ໃນຄະດີສະເພາະໃດໜຶ່ງ ແມ່ນບໍ່ກ່ຽວຂ້ອງກັບການວິເຄາະນັ້ນ.

# 5 ສິ່ງທ້າທາຍດ້ານຫຼັກຖານ ແລະ ສິ່ງທີ່ຄວນເອົາໃຈໃສ່ໃນການກຳນົດ APOV

## 5.1

ມາດຕະຖານໃນການພິສູດ ເພື່ອກຳນົດ APOV ຄວນຄືກັນ ກັບ ການກຳນົດອົງປະກອບການກະທຳຜິດທາງອາຍາ ພາຍໃຕ້ກົດໝາຍແຫ່ງຊາດ, ລວມທັງ ອົງປະກອບອື່ນໆ ຂອງການກະທຳຜິດດ້ານການຄ້າມະນຸດ.

ໂດຍສະເພາະ, ຫຼັກຖານທີ່ເຊື່ອຖືໄດ້ ຕ້ອງພິສູດວ່າ ຜູ້ກະທຳຜິດມີຈຸດປະສົງທີ່ຈະນຳໃຊ້ APOV ໃນການກະທຳຜິດ (ການຮັບເຂົ້າເຮັດວຽກ, ການເດີນທາງ, ການຍົກຍ້າຍ, ການໃຫ້ທີ່ພັກເຊົາ, ຫຼື ການຮັບເອົາ) ເພື່ອຈຸດປະສົງການຂູດຮີດ.

## 5.2

ດັ່ງທີ່ໄດ້ລະບຸໄວ້ຂ້າງເທິງ, ຫຼັກຖານຕ້ອງສະແດງໃຫ້ເຫັນວ່າ ຄວາມອ່ອນແອສ່ວນຕົວ, ຄວາມອ່ອນແອທາງສະຖານະການ ຫຼື ສະພາບເງື່ອນໄຂ ຂອງບຸກຄົນ ໄດ້ຖືກນຳໃຊ້ ດ້ວຍຄວາມຕັ້ງໃຈ ຫຼື ຖືກເອົາລັດເອົາປຽບ  ເຊັ່ນ ຮັບເຂົ້າເຮັດວຽກ, ເດີນທາງ, ຍົກຍ້າຍ, ໃຫ້ທີ່ພັກເຊົາ ຫຼື ຮັບເອົາບຸກຄົນດັ່ງກ່າວ ເພື່ອຈຸດປະສົງໃນການຂູດຮີດຜູ້ກ່ຽວ, ຊຶ່ງບຸກຄົນດັ່ງກ່າວເຊື່ອວ່າ ການປະຕິບັດຕາມເຈດຈຳນົງ ຂອງຜູ້ລ່ວງລະເມີດ ເປັນທາງເລືອກດຽວ ທີ່ເປັນທີ່ຍອມຮັບໄດ້ ຫລື ມີຄວາມເປັນຈິງຕໍ່ກັບຕົນເອງ ແລະ ຄວາມເຊື່ອດັ່ງກ່າວນີ້ ແມ່ນສົມເຫດສົມຜົນ ເມື່ອພິຈາລະນາເຖິງ ສະຖານະການ ຂອງຜູ້ຖືກເຄາະຮ້າຍ. ການນຳໃຊ້ "ວິທີການ" ຕ້ອງມີລັກສະນະເປັນທຳມະຊາດ ພຽງພໍ ແລະ ຈະແຈ້ງສົມຄວນ ເພື່ອສະແດງໃຫ້ເຫັນການລະເມີດ ການສົມຍອມຂອງຜູ້ຖືກເຄາະຮ້າຍ.

## 5.3

ຫຼັກຖານ ຂອງ APOV ອາດເຫັນໄດ້ຈະແຈ້ງ ຫນ້ອຍກ່ວາ ວິທີການຄ້າມະນຸດອື່ນໆ (ເຊັ່ນ: ການໃຊ້ກຳລັງ). ນອກຈາກນັ້ນ, ຜູ້ຖືກເຄາະຮ້າຍ ອາດຈະບໍ່ຖືວ່າຕົນເອງເປັນຜູ້ຖືກເຄາະຮ້າຍ, ໂດຍສະເພາະ ຢູ່ບ່ອນທີ່ເຂົາເຈົ້າຍັງສືບຕໍ່ເພິ່ງພາອາໄສ ຫຼື ພົວພັນກັບຜູ້ທີ່ໄດ້ລ່ວງລະເມີດຄວາມອ່ອນແອຂອງພວກເຂົາ.

ຜູ້ປະຕິບັດວຽກງານຕົວຈິງ ຄວນສາມາດເຂົ້າເຖິງການຮ່ວມມືກັບບັນດາຜູ້ຊ່ຽວຊານ (ເຊັ່ນ: ນັກຈິດຕະວິທະຍາ, ນັກສັງຄົມສົງເຄາະ, ນັກມະນຸດວິທະຍາ ແລະ ທີ່ປຶກສາດ້ານວັດທະນະທຳ) ໃນໄລຍະການສືບສວນ-ສອບສວນ ເພື່ອຮັບປະກັນວ່າ ຫຼັກຖານໄດ້ຖືກເກັບກຳຢ່າງມີປະສິດທິພາບ ແລະ ເໝາະສົມ, ແລະ ຖືກນຳໄປພິສູດໄຕ່ສວນ ໃນໄລຍະການດຳເນີນຄະດີ ເຊັ່ນ ໂດຍຜ່ານທາງ ຫຼື ໄດ້ຮັບການຊ່ວຍເຫຼືອຈາກຄຳໃຫ້ການ ຂອງຊ່ຽວຊານທີ່ເປັນພະຍານ. ການຮ່ວມມືດັ່ງກ່າວ ແມ່ນມີຄວາມຈຳເປັນເພື່ອໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກຜູ້ຖືກເຄາະຮ້າຍ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ເຂົາເຈົ້າໃນການໃຫ້ການ ໃນເວລາພິຈາລະນາຄະດີ. ຫລັກຖານກ່ຽວກັບ APOV ອາດມີຢູ່ປະເທດອື່ນ ນອກເຫນືອຈາກປະທດທີ່ກຳລັງດຳເນີນຄະດີຢູ່. ຄວນກຳນົດຂັ້ນຕອນຕ່າງໆໄວ້ ເພື່ອອຳນວຍຄວາມສະດວກ ແລະ ສະໜັບສະໜູນ ການຮ່ວມມືລະຫວ່າງປະເທດ ລະຫວ່າງ ບັນດາຜູ້ປະຕິບັດວຽກງານຕົວຈິງ ເພື່ອຮັບປະກັນ ໃຫ້ສາມາດກຳນົດຫຼັກຖານ ແລະ ສາມາດແລກປ່ຽນກັນໄດ້.

# 6 ການກຳນົດ ແລະ ການບໍລິຫານຄວາມສ່ຽງ



## 6.1

ການຂາດຄຳນິຍາມທີ່ຈະແຈ້ງຂອງ APOV ແລະ ສິ່ງຜົນເຮັດໃຫ້ເກີດມີຄວາມບໍ່ຊັດເຈນທີ່ພາໃຫ້ເກີດຄວາມສ່ຽງບາງຢ່າງ ທີ່ຄວນຈະຖືກກຳນົດ ແລະ ໄດ້ຮັບການຄຸ້ມຄອງ. ການນຳໃຊ້ ແນວຄວາມຄິດທີ່ບໍ່ຖືກຕ້ອງ ອາດສາມາດເຮັດໃຫ້ສິດຂອງຜູ້ຖືກເຄາະຮ້າຍ ທີ່ຖືກຮັບຮູ້ໃນລັກສະນະເຊັ່ນນັ້ນ ມີໜ້ອຍລົງ, ແລະ ສິດຂອງຜູ້ຖືກກ່າວຫາ ຕໍ່ການພິຈາລະນາຄະດີຢູ່ສານ ທີ່ເປັນທຳ. ຍັງມີຄວາມສ່ຽງທີ່ການນຳໄປໃຊ້ໃນທາງທີ່ຜິດ ອາດສາມາດນຳໄປສູ່ການຜັນຂະຫຍາຍແນວຄວາມຄິດ ຂອງການຄ້າມະນຸດ ທີ່ບຽງເບນລັກສະນະທີ່ສຳຄັນຂອງມັນ ວ່າເປັນອາດຊະຍາກຳທີ່ຮ້າຍແຮງທີ່ສຸດ ແລະ ການລະເມີດສິດທິມະນຸດ.

## 6.2

ເມື່ອແນວຄວາມຄິດ ຂອງ APOV ຖືກກຳນົດເຂົ້າໃນຄຳນິຍາມການຄ້າມະນຸດ ຢູ່ໃນນິຕິກຳພາຍໃນປະເທດ, ຊຶ່ງຄວນຖືກກຳນົດຢ່າງຈະແຈ້ງ ເພື່ອໃຫ້ຄວາມກະຈ່າງແຈ້ງ ແລະ ຄຳແນະນຳແກ່ຜູ້ປະຕິບັດ ແລະ ປ້ອງກັນ ຄວາມສ່ຽງທີ່ຖືກກຳນົດ ຂ້າງເທິງ. ຄຳນິຍາມ ຄວນຢືນຢັນເຖິງ ຄວາມຈຳເປັນຂອງການກຳນົດ ທັງການເກີດຂຶ້ນຂອງຖານະຄວາມສ່ຽງ ແລະ ການສວາຍໃຊ້ຖານະຄວາມສ່ຽງຂອງຜູ້ກະທຳຜິດ. ຄຳນິຍາມ ຄວນຈະພິຈາລະນາບັນຫາກ່ຽວກັບເລື່ອງການສົມຍອມ ເພື່ອວ່າ APOV ໄດ້ຖືກກຳນົດເຖິງລັກສະນະຄວາມຮ້າຍແຮງພຽງພໍ ເພື່ອຈະປະຕິເສດການສົມຍອມ.

## 6.3

ການຄ້າມະນຸດ ເປັນອາດຊະຍາກຳທີ່ຮ້າຍແຮງທີ່ມີໂທດໜັກ. ຄວນມີມາດຕະການປົກປ້ອງໄວ້ ເພື່ອຮັບປະກັນວ່າແນວທາງປະຕິບັດ ທີ່ສົມເຫດສົມຜົນ ສາມາດນຳໃຊ້ເພື່ອທຳຄວາມເຂົ້າໃຈ ແລະ ນຳໃຊ້ APOV, ເພື່ອສົ່ງເສີມ ການຕອບໂຕ້ດ້ານຄວາມຍຸຕິທຳທາງອາຍາ ຢ່າງມີປະສິດທິພາບຕໍ່ການຄ້າມະນຸດ ແລະ ປ້ອງກັນຄວາມສ່ຽງ ທີ່ໄດ້ກ່າວມາຂ້າງເທິງ.

# 7 ການປັບປຸງ ຄວາມເຂົ້າໃຈ ຂອງ ຜູ້ປະຕິບັດ ຕໍ່ APOV

## 7.1

ການສືບສວນ-ສອບສວນ ແລະ ດຳເນີນຄະດີການຄ້າມະນຸດຢ່າງມີປະສິດທິພາບ ຮຽກຮ້ອງໃຫ້ຜູ້ປະຕິບັດວຽກງານຍຸຕິທຳທາງອາຍາ ໄດ້ຮັບການລາຍງານຂໍ້ມູນ ກ່ຽວກັບວິທີການທີ່ຖືກນຳໃຊ້ໂດຍຜູ້ຄ້າມະນຸດ ທີ່ໃຊ້ບັງຄັບຜູ້ຖືກເຄາະຮ້າຍ ຊຶ່ງເປັນໜຶ່ງ ໃນບັນດາການກະທຳທີ່ເປັນຂໍ້ກຳນົດ ຫຼື ຄວາມຕ້ອງການ ຈາກນິຍາມຂອງການຄ້າມະນຸດ.

ຖ້າບໍ່ຄຳນຶງເຖິງວ່າ APOV ເປັນສ່ວນໜຶ່ງ ຂອງຄຳນິຍາມການຄ້າມະນຸດ ແຫ່ງຊາດ ຫຼື ບໍ່, ມັນມີຄວາມສຳຄັນ ແລະ ຈຳເປັນ ທີ່ຈະຮັບປະກັນໃຫ້ຜູ້ປະຕິບັດວຽກງານຕົວຈິງ ເຂົ້າໃຈກ່ຽວກັບສະຖານະພາບຄວາມສ່ຽງຂອງຜູ້ຖືກເຄາະຮ້າຍອາດຈະມີ ຫຼື ເກີດຂຶ້ນໄດ້ແນວໃດ ແລະ ເກີດມີການລ່ວງລະເມີດ ແນວໃດ ຢູ່ໃນສະພາບການຂອງອາດຊະຍາກຳການຄ້າມະນຸດ.

## 7.2

ຄວນຈັດການຝຶກອົບຮົມ ແລະ ສະໜອງຄຳແນະນຳສະເພາະ ກ່ຽວກັບສະຖານະພາບຄວາມສ່ຽງທີ່ຈະຖືກລະເມີດໃຫ້ແກ່ ຜູ້ປະຕິບັດວຽກງານຍຸຕິທຳ ທາງອາຍາ ເພື່ອຮັບປະກັນວ່າ ຜູ້ທີ່ອາດຈະກາຍເປັນຜູ້ຖືກເຄາະຮ້າຍໃນອະນາຄົດ ໄດ້ຮັບການກຳນົດຕົວ ຢ່າງເໝາະສົມ, ຜູ້ກະທຳຜິດທີ່ຖືກກ່າວຫາ ໄດ້ຮັບການສືບສວນ-ສອບສວນ ຢ່າງມີປະສິດທິພາບ, ຜູ້ຕ້ອງສົງໄສຖືກດຳເນີນຄະດີ ຢ່າງຍຸຕິທຳ, ແລະ ຜູ້ຄ້າມະນຸດທີ່ຖືກຕັດສິນລົງໂທດ ຢ່າງເໝາະສົມ ຊຶ່ງຂຶ້ນກັບຄວາມຮ້າຍແຮງຂອງ ການກະທຳຜິດ ຂອງເຂົາເຈົ້າ.



UNODC

ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາດຊະຍາກຳ


**ພະແນກຕ້ານການຄ້າມະນຸດ ແລະ ຕ້ານການລັກລອບເຂົ້າເມືອງຜິດກົດໝາຍ UNODC**
UNODC
P.O. Box 500
1400 ວຽນນາ
ອົດເຕຣຍ

ໂທ. **(+43-1) 26060-5687**
ອີເມວ: **unodchtmss@un.org**